# ແຜນການສອນ ເພດສຶກສາ

## ສຳລັບອາຊີຕາເວັນອອກສຽງໃຕ້ ຂອງ amaze

ການເຂົ້າເຖິງ
ການເບິ່ງແຍງ
ສຸຂະພາບທາງເພດ



amaze

Advocates for Youth
Rights. Respect. Responsibility.

unesco

UNFPA

# ກ່ຽວກັບບົດຮຽນບົດນີ້...

ແຜນການສອນນີ້ ແມ່ນຫນຶ່ງໃນຊຸດແຜນການສອນທີ່ມີ 9 ບົດແຍກ ທີ່ເປັນຕົ້ນສະບັບ ເພື່ອສະໜັບສະໜູນການສອນວິຊາເພດສຶກສາ ໃນໂຮງຮຽນ ຫຼື ນອກໂຮງຮຽນ ໃນອາຊີຕາເວັນອອກສຽງໃຕ້. ແຜນການສອນຕົ້ນສະບັບນີ້ ຖືກອອກແບບມາເພື່ອລວມເຂົ້າໃຊ້ໃນຊຸດວິດີໂອເພື່ອການສຶກສາຂອງ AMAZE ທີ່ກ່ຽວຂ້ອງກັບຫົວຂໍ້ແຜນການສອນ ແລະ ສາມາດນໍາໃຊ້ເພື່ອເສີມກັບແຜນການສອນ ຫຼື ແຫຼ່ງຂໍ້ມູນ ທີ່ມີຢູ່ແລ້ວ ທີ່ທ່ານອາດໃຊ້ໃນການນໍາສະເໜີວິຊາເພດສຶກສາ.

ຕາມຫຼັກການແລ້ວ, ການຮຽນຮູ້ກ່ຽວກັບຫົວຂໍ້ເພດສຶກສາສະເພາະໃດໜຶ່ງ ຄວນໃຫ້ຜູ້ຮຽນມີໂອກາດໄດ້ພັດທະນາ, ນໍາໃຊ້ ແລະ ຝຶກຝົນການຮຽນຮູ້ ໃນແງ່ຂອງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ໃນແຜນການສອນເຫຼົ່ານີ້ ພວກເຮົາໄດ້ຍົກຕົວຢ່າງຜົນການຮຽນຮູ້ເບື້ອງຕົ້ນພຽງຈໍານວນໜຶ່ງທີ່ສາມາດກໍານົດເປົ້າຫມາຍໄດ້ ໂດຍຄໍານຶງວ່າບົດຮຽນພຽງບົດດຽວ ມັກຈະບໍ່ພຽງພໍທີ່ຈະບັນລຸ ຜົນການຮຽນໃດໜຶ່ງໄດ້ຢ່າງເລິກເຊິ່ງ ຫຼື ກວມເອົາຫຼາຍກວ່າຫນຶ່ງຂົງເຂດການຮຽນຮູ້ໄດ້. ເຮົາຊຸກຍູ້ໃຫ້ຄູຈັດຕາຕະລາງເວລາ ໃຫ້ມີການສອນບົດຮຽນຕິດຕາມເພີ່ມເຕີມເພື່ອສົ່ງເສີມຜົນການຮຽນຮູ້ທີ່ເປັນຈຸດປະສົງຂອງບົດຮຽນເພດສຶກສາເຫຼົ່ານີ້, ແລະ ໃຊ້ປະໂຫຍດຈາກໂອກາດອື່ນໆທັງຢູ່ໃນ ແລະ ນອກຫ້ອງຮຽນ ທີ່ຊ່ວຍໃຫ້ຜູ້ຮຽນສາມາດສະທ້ອນທັດສະນະຄະຕິ ແລະ ຝຶກຝົນ ແລະ ເສີມສ້າງທັກສະ.

TH/DOC/HWT-IQE/23/002-LA-2

amaze

# ການເຂົ້າເຖິງການເບິ່ງແຍງສຸຂະພາບທາງເພດ

*ແຜນການສອນເພດສຶກສາ ຂອງ* **amaze**

## ຄວາມສອດຄ່ອງກັບ ຄຳແນະນຳສາກົນດ້ານວິຊາການກ່ຽວກັບເພດສຶກສາ

**ແນວຄວາມຄິດຫຼັກທີ 5:** ທັກສະເພື່ອສຸຂະພາບ ແລະ ສະຫວັດດີການ

- **ຫົວຂໍ້ 5.5:** ການຊອກຫາສຸຂະພາບ ແລະ ການສະໜັບສະໜູນ, ອາຍຸ 12-15 ປີ

**ແນວຄວາມຄິດຫຼັກທີ 8:** ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

- **ຫົວຂໍ້ 8.3:** ຄວາມເຂົ້າໃຈ, ການຮັບຮູ້ ແລະ ການຫຼຸດຜ່ອນຄວາມສ່ຽງຂອງພະຍາດຕິດຕໍ່ທາງເພດສຳພັນ, ລວມທັງເຊື້ອ HIV, ອາຍຸ 12-15 ປີ.

## ຄວາມຮູ້ພື້ນຖານຂອງນັກຮຽນ

ນັກຮຽນໄດ້ຮຽນຮູ້ວ່າ ການເຂົ້າເຖິງການເບິ່ງແຍງສຸຂະພາບທາງເພດຂອງໄວໜຸ່ມ ແລະ ການຊອກຫາການຊ່ວຍເຫຼືອໃນເວລາທີ່ເຂົາເຈົ້າຕ້ອງການ ແມ່ນມີຄວາມສຳຄັນ.

## ກຸ່ມອາຍຸເປົ້າໝາຍ

ຊັ້ນມັດທະຍົມສຶກສາປີທີ 3 (ອາຍຸປະມານ 12-14 ປີ)

## ເວລາ

45 ນາທີ

## ການກະກຽມຂອງຄູ

- ເຂົ້າເຖິງ ແລະ ເບິ່ງຕົວຢ່າງ ວິດີໂອສັ້ນຂອງ AMAZE ກ່ຽວກັບ ການເຂົ້າເຖິງການເບິ່ງແຍງສຸຂະພາບທາງເພດສຳລັບເດັກນ້ອຍ ເພື່ອໃຫ້ລຶ້ງເຄີຍກັບເນື້ອໃນຂອງວິດີໂອ ແລະ ເພື່ອໃຫ້ແນ່ໃຈວ່າມັນສອດຄ່ອງກັບເນື້ອຫາທີ່ໄດ້ຮັບການສະໜັບສະໜູນຈາກຜູ້ປົກຄອງ ແລະ ໂຮງຮຽນ.

- ທົດສອບເປີດວິດີໂອເພື່ອໃຫ້ກຽມພ້ອມເບິ່ງໃນລະຫວ່າງການຂຶ້ນສອນ, ບໍ່ວ່າຈະເປັນການວາງລຳດັບການເປີດຈົນຮອດຕອນເລີ່ມຕົ້ນ (ເພື່ອຫຼີກລ່ຽງໂຄສະນາ) ໃນ YouTube, ອອກຈາກ **ລາຍການຫຼິ້ນຂອງ AMAZE,** ຫຼື ສະບັບທີ່ໄດ້ດາວໂຫຼດມາ. ພິຈາລະນາເລືອກໃຊ້ **ລູກຫຼິ້ນຄວາມໄວຂອງ YouTube** ເພື່ອປັບຄວາມໄວຂອງວິດີໂອເພື່ອໃຫ້ແທດເໝາະທີ່ສຸດສຳລັບນັກຮຽນ.

- ກຳນົດຜູ້ໃຫ້ບໍລິການດ້ານສຸຂະພາບຈາກການບໍລິການສຸຂະພາບຂອງໂຮງຮຽນ ຫຼື ສຸກສາລາໃນທ້ອງຖິ່ນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ຫຼື ໂຮງໝໍທີ່ສາມາດໃຫ້ຄຳແນະນຳກ່ຽວກັບການເບິ່ງແຍງສຸຂະພາບທາງເພດທີ່ມີໃຫ້ກັບໄວໜຸ່ມ. ແບ່ງປັນວິດີໂອສັ້ນ ຂອງ AMAZE ກ່ຽວກັບ ການເຂົ້າເຖິງເບິ່ງແຍງສຸຂະພາບທາງເພດສຳລັບເດັກນ້ອຍ ກັບເຂົາເຈົ້າກ່ອນລ່ວງໜ້າ ແລະ ໃຫ້ເຂົາເຈົ້າຮູ້ວ່າທ່ານຈະເປີດວິດີໂອນີ້ຊຶ່ງເປັນການແນະນຳໃນຕອນເລີ່ມຕົ້ນຂອງຊົ່ວໂມງຮຽນກ່ອນທີ່ເຂົາເຈົ້າຈະນຳສະເໜີ.

- ນຳໃຊ້ສື່ການສອນຂອງຄູ: ຄຳແນະນຳສຳລັບຄູໃນການກະກຽມຜູ້ບັນຍາຍຮັບເຊີນ, ເພື່ອແນະນຳການເລືອກ ແລະ ການກະກຽມຜູ້ໃຫ້ບໍລິການດ້ານສຸຂະພາບນີ້ກ່ອນທີ່ພວກເຂົາຈະນຳສະເໜີໃຫ້ນັກຮຽນຂອງທ່ານ. ຖ້າຈະໃຫ້ດີທີ່ສຸດ, ຜູ້ບັນຍາຍຮັບເຊີນ ຄວນນຳເອົາບາງຕົວຢ່າງຂອງວິທີການຄຸມກຳເນີດທີ່ມີຢູ່ໃນທ້ອງຖິ່ນເພື່ອສະແດງໃຫ້ນັກຮຽນເບິ່ງໃນລະຫວ່າງຂຶ້ນສອນຖ້າຫາກໄດ້ຮັບອະນຸຍາດ.

- ມື້ໜຶ່ງກ່ອນການຂຶ້ນບັນຍາຍຂອງຜູ້ບັນຍາຍຮັບເຊີນ, ໃຫ້ນັກຮຽນຂຽນໜຶ່ງຄຳຖາມທີ່ຕ້ອງການຖາມຜູ້ບັນຍາຍຮັບເຊີນ ກ່ຽວກັບການເບິ່ງແຍງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ໂດຍບໍ່ມີການເປີດເຜີຍຊື່. ຮວບຮວມບັນດາຄຳຖາມເຫຼົ່ານີ້ເພື່ອໃຊ້ໃນກໍລະນີທີ່ນັກຮຽນມີຄວາມເຂີນອາຍທີ່ຈະຖາມໂດຍກົງໃນລະຫວ່າງການນຳສະເໜີ ເຊິ່ງນີ້ຈະເປັນປະໂຫຍດໃນເວລາທີ່ນັກຮຽນລັງເລທີ່ຈະຖາມຄຳຖາມແບບເຊິ່ງໜ້າ.

- ພິມບັນດາເອກະສານຕ່າງໆທີ່ກ່ຽວຂ້ອງທີ່ຜູ້ບັນຍາຍຮັບເຊີນອາດຕ້ອງການແຈກຢາຍ ຖ້າວ່າພວກເຂົາບໍ່ສາມາດເອົາບັນດາເອກະສານເຫຼົ່ານັ້ນມານຳໄດ້.

- ເວັ້ນເສຍແຕ່ວ່າຜູ້ບັນຍາຍຮັບເຊີນກຽມໃຫ້ແລ້ວ, ໃຫ້ພິຈາລະນາສ້າງລາຍການສິ່ງອຳນວຍຄວາມສະດວກທີ່ໃຫ້ບໍລິການດ້ານສຸຂະພາບທີ່ເປັນມິດຕໍ່ໄວໜຸ່ມ ແລະ ເຍົາວະຊົນ ເພື່ອແຈກຢາຍໃຫ້ນັກຮຽນໃນຕອນທ້າຍຂອງຊົ່ວໂມງຮຽນ.

- ພິມຊຸດເອກະສານແຈກຢາຍນັກຮຽນ: ການຮັກສາສຸຂະພາບທາງເພດຂອງຕົນເອງ - ຫນຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ.

# ການເຂົ້າເຖິງການເບິ່ງແຍງ ສຸຂະພາບທາງເພດ

*ແຜນການສອນ ເພດສຶກສາ ຂອງ amaze*

## ອຸປະກອນ/ເອກະສານທີ່ຕ້ອງການ

- ຄອມພິວເຕີ ທີ່ສາມາດເຂົ້າເຖິງອິນເຕີເນັດ ແລະ ລຳໂພງ
- ເຄື່ອງສາຍ LCD ແລະ ຈໍ
- ລິ້ງວີດີໂອ: https://youtu.be/7ZkSJC_ojvs
- ສໍຂາວ/ສໍສີ ແລະ ກະດານດຳ
- ສື່ການສອນຂອງຄູ: ຄຳແນະນຳສຳລັບຄູໃນການກະກຽມຜູ້ບັນຍາຍຮັບເຊີນ
- ສື່ການຮຽນຂອງນັກຮຽນ: ການຮັກສາສຸຂະພາບທາງເພດຂອງຕົນເອງ
- ຂໍ້ມູນໃດໜຶ່ງທີ່ມີ ກ່ຽວກັບການຮັກສາສຸຂະພາບທາງເພດທີ່ຜູ້ບັນຍາຍຮັບເຊີນຈະນຳສະເໜີ



## ຈຸດປະສົງການຮຽນຮູ້

ໃນຕອນທ້າຍຂອງບົດຮຽນນີ້, ນັກຮຽນຈະສາມາດ:

1. ອະທິບາຍກ່ຽວກັບ ການບໍລິການສຸຂະພາບທາງເພດ ທີ່ໄວລຸ້ນສາມາດເຂົ້າເຖິງໄດ້ ຢ່າງໜ້ອຍ 3 ຢ່າງ. (ຄວາມຮູ້)
2. ຮັບຮູ້ວ່າການຮັກສາສຸຂະພາບທາງເພດຂອງຕົນເອງແມ່ນສຳຄັນຕໍ່ສຸຂະພາບໂດຍລວມ ແລະ ບໍ່ມີຫຍັງທີ່ຈະອັບອາຍ. (ທັດສະນະຄະຕິ)
3. ລະບຸໄດ້ຢ່າງຫນ້ອຍຫນຶ່ງສະຖານທີ່ ທີ່ໄວໜຸ່ມສາມາດໄດ້ຮັບການກວດກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນ ແລະ ການຖືພາ ໄດ້ຢ່າງໜ້ອຍ 1 ແຫ່ງ. (ຄວາມຮູ້)

## ຂັ້ນຕອນ

### ຂັ້ນຕອນທີ 1

ແນະນຳຫົວຂໍ້ ແລະ ເຫດຜົນຂອງບົດຮຽນນີ້ ໂດຍກ່າວວ່າ, **"ເພື່ອໃຫ້ມີສຸຂະພາບທີ່ດີ, ສິ່ງສຳຄັນຄືຕ້ອງຮູ້ ແລະ ສາມາດເຂົ້າເຖິງການບໍລິການດ້ານສຸຂະພາບໃນເວລາທີ່ເຈົ້າຕ້ອງການ. ການໂອ້ລົມກັບໝູ່ເພື່ອນ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້ ແມ່ນເປັນວິທີທີ່ດີທີ່ຈະເລີ່ມຊອກຫາວິທີການ ແລະ ສະຖານທີ່ທີ່ຈະຂໍຮັບການຮັກສາ ພ້ອມກັບການຮັບຂໍ້ມູນຕ່າງໆກ່ຽວກັບການບໍລິການ. ມື້ນີ້ ພວກເຮົາຈະຮຽນຮູ້ກ່ຽວກັບການບໍລິການສຸຂະພາບທາງເພດ, ເຊິ່ງກ່ຽວຂ້ອງກັບສ່ວນຕ່າງໆຂອງຮ່າງກາຍເຮົາທີ່ກ່ຽວຂ້ອງກັບການສືບພັນ ແລະ ພຶດຕິກຳທາງເພດ, ສະຖານທີ່ທີ່ຈະເຂົ້າເຖິງການບໍລິການເຫຼົ່ານັ້ນ, ແລະ ການບໍລິການເຫຼົ່ານັ້ນມີຄວາມສຳຄັນຕໍ່ສຸຂະພາບໂດຍລວມຂອງຄົນເຮົາແນວໃດ."**

ຖາມນັກຮຽນວ່າ, **"ໃຜສາມາດບອກໄດ້ຫນຶ່ງເຫດຜົນ ວ່າເປັນຫຍັງໄວໜຸ່ມອາດຈະຕ້ອງການການບໍລິການສຸຂະພາບທາງເພດ?"** ຂໍອາສາສະໝັກເພື່ອແບ່ງປັນແນວຄວາມຄິດຂອງເຂົາເຈົ້າ, ເຊິ່ງອາດຈະປະກອບມີຄຳຕອບ ດັ່ງນີ້:

- ພວກເຂົາຄິດວ່າ ອາດກຳລັງຖືພາ ແລະ ຕ້ອງການກວດການຖືພາ.
- ພວກເຂົາກັງວົນວ່າ ຖົງຢາງອະນາໄມຈີກຂາດໃນລະຫວ່າງການຮ່ວມເພດສຳພັນ.
- ພວກເຂົາຄິດວ່າ ອາດຕິດເຊື້ອທາງເພດສຳພັນ ແລະ ຕ້ອງການກວດພະຍາດຕິດຕໍ່ທາງເພດສຳພັນ.
- ພວກເຂົາກຳລັງວາງແຜນທີ່ຈະມີເພດສຳພັນ ແລະ ຕ້ອງການຄຸມກຳເນີດ.
- ພວກເຂົາກຳລັງວາງແຜນທີ່ຈະມີເພດສຳພັນ ແລະຕ້ອງການກວດສອບກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນ.
- ພວກເຂົາຕ້ອງການກວດຫາເຊື້ອ HIV.
- ພວກເຂົາຕ້ອງການຄຸມກຳເນີດເພື່ອເຫດຜົນດ້ານສຸຂະພາບອື່ນໆ.

ຕອນນີ້ໃຫ້ຖາມນັກຮຽນວ່າ, **"ໃຜສາມາດບອກຄູໄດ້ບໍ່ວ່າ ເປັນຫຍັງໄວໜຸ່ມອາດຈະບໍ່ຢາກໄປສູນບໍລິການສຸຂະພາບເພື່ອຮັບການຮັກສາ?"** ຂໍອາສາສະໝັກເພື່ອແບ່ງປັນແນວຄວາມຄິດຂອງເຂົາເຈົ້າ, ເຊິ່ງອາດຈະປະກອບມີຄຳຕອບ ດັ່ງນີ້:

- ພວກເຂົາຮູ້ສຶກອາຍທີ່ຈະໄປດ້ວຍຕົນເອງ.
- ພວກເຂົາຮູ້ສຶກລະອາຍທີ່ຈະໄປ.
- ພວກເຂົາກັງວົນວ່າ ຈະມີຄົນເຫັນເຂົາເຈົ້າໄປໂຮງໝໍ ແລະ ສົງໄສວ່າເປັນຫຍັງພວກເຂົາຈຶ່ງໄປບ່ອນນັ້ນ.
- ພວກເຂົາບໍ່ຕ້ອງການໃຫ້ພະນັກງານໂຮງໝໍບອກພໍ່ແມ່ຂອງເຂົາເຈົ້າ.
- ພວກເຂົາບໍ່ຮູ້ວ່າ ມັນຈະມີຄ່າໃຊ້ຈ່າຍຫຼາຍປານໃດ ແລະ ພວກເຂົາຈະສາມາດຈ່າຍໄດ້ບໍ່.
- ພວກເຂົາບໍ່ຮູ້ວ່າ ຈະຄາດຫວັງຫຍັງ.
- ພວກເຂົາບໍ່ມີເວລາໄປ.

(5 ນາທີ)

**ໝາຍເຫດສຳລັບຄູ:** ໃຫ້ແນ່ໃຈວ່າໄດ້ເຊີນຜູ້ບັນຍາຍໃຫ້ເຂົ້າຮ່ວມກ່ອນເວລາທີ່ເຂົາເຈົ້າຈະບັນຍາຍ ເພື່ອໃຫ້ພວກເຂົາໄດ້ຮັບຟັງສິ່ງທີ່ທ່ານແນະນຳໃນຊ່ວງຕົ້ນແລະຄຳຕອບທີ່ນັກຮຽນແບ່ງປັນຕໍ່ກັບຄຳຖາມເປີດເຫຼົ່ານີ້ເພື່ອໃຫ້ເຂົາເຈົ້າສາມາດເລີ່ມບັນຍາຍເຖິງປະເດັນດັ່ງກ່າວໃນການນຳສະເໜີຕໍ່ຫ້ອງຮຽນ. ແຈ້ງໃຫ້ຜູ້ບັນຍາຍຮັບເຊີນຊາບກ່ອນລ່ວງໜ້າ ເພື່ອໃຫ້ເນັ້ນຍ້ຳວ່າ ການຊອກຫາການບໍລິການສຸຂະພາບທາງເພດບໍ່ແມ່ນເລື່ອງທີ່ໜ້າອາຍ ແລະ ເປັນສິ່ງທີ່ສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບຕໍ່ການຮັກສາສຸຂະພາບຂອງຕົນເອງ.

**ຂັ້ນຕອນທີ 2**

ໃຫ້ເວົ້າວ່າ ໃນຂະນະທີ່ມີຫຼາຍເຫດຜົນສຳລັບການໄດ້ຮັບການບໍລິການສຸຂະພາບທາງເພດ, ດັ່ງທີ່ໄດ້ກ່າວກ່ອນໜ້ານີ້, ແຕ່ມັນກໍຍັງເປັນເລື່ອງຍາກສຳລັບໄວໜຸ່ມທີ່ຈະເຂົ້າເຖິງສິ່ງເຫຼົ່ານັ້ນ. ບອກນັກຮຽນວ່າ ບາງວິທີທີ່ເຮັດໃຫ້ມັນງ່າຍຂຶ້ນໃນການເຂົ້າເຖິງການບໍລິການ ລວມມີ ການໂອ້ລົມ ຫຼື ການໄປກັບໝູ່ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້ ແລະ ຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບການບໍລິການຫຍັງແດ່ທີ່ມີ, ສິ່ງທີ່ຄາດຫວັງ ແລະ ສະຖານທີ່ທີ່ຈະເຂົ້າເຖິງການບໍລິການເຫຼົ່ານັ້ນ. ບອກໃຫ້ນັກຮຽນຮູ້ວ່າຄູໄດ້ເຊີນແຂກພິເສດເພື່ອມາບັນຍາຍໃນຫ້ອງຮຽນໃນມື້ນີ້ ເຊິ່ງເປັນບຸກຄົນທີ່ສາມາດບອກພວກເຂົາໄດ້ທັງໝົດທຸກຢ່າງກ່ຽວກັບການບໍລິການທີ່ມີຢູ່ ແລະ ຕອບຕໍ່ທຸກຄວາມກັງວົນທີ່ພວກເຂົາອາດຈະມີກ່ຽວກັບການໄປໂຮງໝໍກວດສຸຂະພາບ. ແນະນຳຜູ້ບັນຍາຍຮັບເຊີນ ແລະ ອະທິບາຍເຖິງບົດບາດຂອງພວກເຂົາຢູ່ໃນສູນບໍລິການສຸຂະພາບ ແລະ ຊື່ຂອງສູນບໍລິການສຸຂະພາບ. ອະທິບາຍວ່າພວກເຂົາຈະໄດ້ເບິ່ງວິດີໂອສັ້ນຮ່ວມກັນກ່ອນ ແລະ ຈາກນັ້ນຜູ້ບັນຍາຍຮັບເຊີນຈະນຳສະເໜີເປັນເວລາ 10 ນາທີ, ຕາມດ້ວຍເວລາໃຫ້ນັກຮຽນຖາມຄຳຖາມ. ຊຸກຍູ້ໃຫ້ນັກຮຽນຂຽນຄຳຖາມເພີ່ມເຕີມ ຊຶ່ງເຂົາເຈົ້າອາດມີຄຳຖາມໃນລະຫວ່າງການເບິ່ງວິດີໂອ ແລະ ໃນຂະນະທີ່ຜູ້ບັນຍາຍຮັບເຊີນກຳລັງນຳສະເໜີ.

ສະແດງວິດີໂອທີ່ມີຄວາມຍາວສອງນາທີເຄິ່ງ ຂອງ AMAZE ກ່ຽວກັບ ການເຂົ້າເຖິງການເບິ່ງແຍງສຸຂະພາບທາງເພດສຳລັບເດັກນ້ອຍ.
https://bit.ly/accessingsexualhealthcare
(8 ນາທີ)




**ຂັ້ນຕອນທີ 3**

ຫຼັງຈາກເບິ່ງວິດີໂອແລ້ວ, ເຊີນຜູ້ບັນຍາຍຮັບເຊີນນຳສະເໜີກ່ຽວກັບສູນບໍລິການສຸຂະພາບຂອງພວກເຂົາ ແລະ ການບໍລິການສຸຂະພາບທາງເພດທີ່ພວກເຂົາສະໜອງໃຫ້ໄວໜຸ່ມ. ຂໍໃຫ້ນັກຮຽນເກັບຄຳຖາມຂອງເຂົາເຈົ້າໄວ້ຖາມຫຼັງຈາກສິ້ນສຸດການນຳສະເໜີ ແລະ ເຊີນຜູ້ບັນຍາຍຮັບເຊີນເລີ່ມຕົ້ນໄດ້.
(12 ນາທີ)

**ຂັ້ນຕອນທີ 4**

ເມື່ອຜູ້ບັນຍາຍຮັບເຊີນສະຫຼຸບແລ້ວ, ຂອບໃຈພວກເຂົາແລະແຈກຢາຍບັນດາເອກະສານຕ່າງໆທີ່ຜູ້ບັນຍາຍຮັບເຊີນກະກຽມໄວ້. ຖາມນັກຮຽນຖ້າຫາກວ່າເຂົາເຈົ້າມີຄຳຖາມ ແລະ ອຳນວຍຄວາມສະດວກໃນຊ່ວງເວລາຂອງການຖາມ-ຕອບ ປະມານ 10 ນາທີ. ຖ້ານັກຮຽນບໍ່ມີຄຳຖາມໃນເບື້ອງຕົ້ນ, ທ່ານສາມາດເລີ່ມກ່ອນດ້ວຍຄຳຖາມຕໍ່ໄປນີ້ ຖ້າຂໍ້ມູນນີ້ຍັງບໍ່ທັນໄດ້ກ່າວເຖິງໃນການນຳສະເໜີຂອງຜູ້ບັນຍາຍຮັບເຊີນ. ນອກຈາກນັ້ນ, ຖ້າຫາກທ່ານມີຄຳຖາມທີ່ໄດ້ໃຫ້ນັກຮຽນຂຽນໄວ້ກ່ອນນັ້ນ, ຈົ່ງຍົກເອົາບາງຄຳຖາມເຫຼົ່ານັ້ນຂຶ້ນມາສົນທະນາ ເພື່ອໃຫ້ຄຳຖາມຂອງພວກເຂົາໄດ້ຮັບຄຳຕອບ.

ຕົວຢ່າງຄຳຖາມສຳລັບແຂກຜູ້ບັນຍາຍ:

- ເປັນຫຍັງມັນຈຶ່ງສຳຄັນສຳລັບໄວໜຸ່ມໃນການເຂົ້າເຖິງການບໍລິການສຸຂະພາບທາງເພດ?
- ອາຍຸຈັກປີ ໄວໜຸ່ມຈຶ່ງສາມາດເຂົ້າເຖິງການບໍລິການໄດ້ດ້ວຍຕົນເອງ?
- ທ່ານມີການໃຫ້ບໍລິການຮັກສາສຸຂະພາບທາງເພດປະເພດໃດແດ່?
- ຄລີນິກຂອງທ່ານຕັ້ງຢູ່ໃສ? ຄົນໄວໜຸ່ມຈະສາມາດເດີນທາງໄປຄລີນິກຂອງທ່ານໄດ້ແນວໃດ? ມີລົດຂົນສົ່ງບໍລິການບໍ່?
- ການບໍລິການທີ່ທ່ານສະໜອງນັ້ນ ມີຄ່າໃຊ້ຈ່າຍຄືແນວໃດ?
- ທຸກຢ່າງເປັນຄວາມລັບບໍ່, ໝາຍຄວາມວ່າບໍ່ມີໃຜສາມາດຮູ້ກ່ຽວກັບມັນບໍ່? ຖ້າບໍ່, ແມ່ນຫຍັງທີ່ບໍ່ເປັນຄວາມລັບ ແລະ ຍ້ອນຫຍັງ?

(10 ນາທີ)

**ຂັ້ນຕອນທີ 5**

ເມື່ອເວລາຜ່ານໄປ, ໃຫ້ນັກຮຽນຂອບໃຈຜູ້ບັນຍາຍຮັບເຊີນທີ່ໄດ້ໃຊ້ເວລາ ແລະ ແບ່ງປັນກ່ຽວກັບຄວາມຊ່ຽວຊານຂອງພວກເຂົາ.

ຂໍໃຫ້ນັກຮຽນຄິດຫາສິ່ງໃໝ່ ທີ່ພວກເຂົາໄດ້ຮຽນຮູ້ຈາກການນຳສະເໜີ ແລະ ຍົກມືຂຶ້ນເມື່ອພວກເຂົາມີບາງສິ່ງທີ່ຕ້ອງການເວົ້າ. ຂໍອາສາສະໝັກຫ້າຄົນເພື່ອແບ່ງປັນສິ່ງໃໝ່ທີ່ເຂົາເຈົ້າໄດ້ຮຽນຮູ້ຈາກການນຳສະເໜີຂອງຜູ້ບັນຍາຍຮັບເຊີນ ນຳກຸ່ມທັງໝົດ, ກວດສອບໃຫ້ແນ່ໃຈວ່າ ບໍ່ມີຄຳເຫັນໃດໆຊ້ຳທີ່ໄດ້ແບ່ງປັນແລ້ວ.

(5 ນາທີ)

**ຂັ້ນຕອນທີ 6**

ສະຫຼຸບໂດຍເນັ້ນໃຫ້ເຫັນວ່າການຮັກສາສຸຂະພາບທາງເພດຂອງຕົນເອງເປັນສ່ວນໜຶ່ງທີ່ສຳຄັນໃນການຮັກສາສຸຂະພາບໂດຍລວມຂອງຕົນເອງ. ໃນຂະນະທີ່ອາດຈະເບິ່ງຄືວ່າຍາກທີ່ຈະເຂົ້າເຖິງການບໍລິການດ້ານສຸຂະພາບໃນຕອນທຳອິດ, ເມື່ອເຈົ້າຮູ້ວ່າການບໍລິການແມ່ນຫຍັງ ຄືທີ່ຕອນນີ້ເຮົາກໍ່ໄດ້ຮັບຮູ້ແລ້ວ, ແລະ ຮູ້ວ່າຕ້ອງໄປບ່ອນໃດ, ມັນຈະຊ່ວຍໄດ້ຫຼາຍ. ການຂໍໃຫ້ໝູ່ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້ໄປນຳເຈົ້າຕາມນັດໝາຍ ແມ່ນອີກວິທີໜຶ່ງທີ່ຈະໄດ້ຮັບການສະໜັບສະໜູນເພື່ອໃຫ້ໄດ້ຮັບການຮັກສາທີ່ເຈົ້າຕ້ອງການ. ຢືນຢັນວ່າການຊອກຫາການບໍລິການດ້ານສຸຂະພາບທາງເພດແມ່ນບໍ່ມີຫຍັງທີ່ຈະຕ້ອງອັບອາຍ ແລະ ເປັນວິທີທີ່ດີທີ່ຈະຮັບຜິດຊອບຕໍ່ສຸຂະພາບຂອງຕົນເອງ.

ແຈກຢາຍສຳເນົາເອກະສານວຽກບ້ານ, ເອກະສານແຈກຢາຍນັກຮຽນ: ການຮັກສາສຸຂະພາບທາງເພດຂອງຕົນເອງ, ແລະ ອະທິບາຍທິດທາງ ແລະ ຄວາມຄາດຫວັງສຳລັບວຽກບ້ານກັບນັກຮຽນຂອງທ່ານ. ອະທິບາຍວິທີການທີ່ນັກຮຽນຄວນເຮັດເພື່ອໃຫ້ສຳເລັດວຽກບ້ານ ແລະ ເມື່ອໃດທີ່ຕ້ອງໄດ້ສົ່ງ.

(5 ນາທີ)

## ສະຫຼຸບປະເດັນທີ່ສຳຄັນ

- ການຮັກສາສຸຂະພາບທາງເພດຂອງຕົນເອງ ເປັນສ່ວນໜຶ່ງທີ່ສຳຄັນໃນການຮັກສາສຸຂະພາບໂດຍລວມຂອງຕົນເອງ.
- ການຮູ້ວ່າການບໍລິການສຸຂະພາບທາງເພດແມ່ນຫຍັງແລະສະຖານທີ່ໃດທີ່ຈະເຂົ້າເຖິງການບໍລິການເຫຼົ່ານັ້ນ ມັນເປັນການເລີ່ມຕົ້ນທີ່ດີທີ່ຈະສາມາດໄດ້ຮັບການຮັກສາເມື່ອທ່ານຕ້ອງການ.
- ການຂໍໃຫ້ໝູ່ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້ໄປນຳທ່ານເພື່ອໄປກວດ ເປັນອີກວິທີໜຶ່ງທີ່ສະໜັບສະໜູນການເຂົ້າເຖິງການຮັກສາ.

## ທາງເລືອກສຳລັບການປະເມີນຈຸດປະສົງການຮຽນຮູ້ໃນຂະນະສະຫຼຸບບົດຮຽນ

ການມອບໝາຍວຽກບ້ານສາມາດນຳໃຊ້ເຂົ້າໃນການປະເມີນ.

## ຄຳແນະນຳໃນການປັບປ່ຽນສຳລັບການຮຽນການສອນທາງໄກ

ໃນກໍລະນີທີ່ເປັນການສອນທາງໄກ, ນຳໃຊ້ລະບົບດິຈິຕອນເຊັ່ນ Google Classroom ຫຼື Zoom ເພື່ອສະແດງວິດີໂອ ແລະ ໃຫ້ຜູ້ບັນຍາຍຮັບເຊີນນຳສະເໜີຜ່ານວິດີໂອທາງໄກ ແລະ ຖ້າເປັນໄປໄດ້ອາດນຳສະເໜີພາຊີມສະຖານທີ່ອຳນວຍຄວາມສະດວກ ຖ້າມີເວລາພຽງພໍ. ຄຳຖາມຂອງນັກຮຽນສາມາດແບ່ງປັນໃນຊ່ອງແຊັດສົນທະນາເພື່ອໃຫ້ຜູ້ບັນຍາຍຮັບເຊີນໄດ້ຕອບ. ຄູສາມາດສົ່ງວຽກບ້ານໃຫ້ນັກຮຽນທາງອີເມວ ແລະ ໃຫ້ນັກຮຽນສົ່ງວຽກບ້ານກັບທາງອີເມວ.

## ວຽກບ້ານ (ຖ້າມີ)

ເບິ່ງຂັ້ນຕອນທີ 6 ຂ້າງເທິງ ແລະ ແຈກຢາຍເອກະສານນັກຮຽນ: ການຮັກສາສຸຂະພາບທາງເພດຂອງຕົນເອງ.

## ສື່ການສອນຂອງຄູ: ຄຳແນະນຳສຳລັບຄູໃນການກະກຽມຜູ້ບັນຍາຍຮັບເຊີນ

ນີ້ແມ່ນບາງຄຳຖາມທີ່ຄວນພິຈາລະນາເມື່ອຄັດເລືອກຜູ້ບັນຍາຍຮັບເຊີນ ແລະ ກະກຽມຜູ້ບັນຍາຍຮັບເຊີນເພື່ອນຳສະເໜີຕໍ່ນັກຮຽນຂອງທ່ານ.

1. ຂໍ້ມູນຂອງຜູ້ບັນຍາຍຮັບເຊີນຖືກຕ້ອງຕາມຫຼັກການແພດ ຫຼື ບໍ່?
2. ການນຳສະເໜີ (ລວມທັງວິທີການ ແລະ ເອກະສານ) ແມ່ນກວມເອົາຄວາມຕ້ອງການຂອງນັກຮຽນທັງໝົດ ຫຼືບໍ່?
3. ມີຄວາມແນ່ໃຈບໍ່ວ່າຜູ້ບັນຍາຍຮັບເຊີນບໍ່ໄດ້ໃຊ້ເຕັກນິກການສຶກສາທີ່ອີງໃສ່ຄວາມຢ້ານກົວ?
4. ປັດຊະຍາຂອງຊ່ຽວຊານຜູ້ບັນຍາຍ ແມ່ນສອດຄ່ອງກັບຫຼັກສູດຂອງທ່ານ ຫຼື ບໍ່?
5. ເອກະສານທີ່ນຳໃຊ້ເໝາະສົມສຳລັບນັກຮຽນທຸກເຊື້ອຊາດ, ເພດ, ລົດນິຍົມທາງເພດ, ພື້ນຖານຊົນເຜົ່າ ແລະ ວັດທະນະທຳ, ແລະ ນັກຮຽນພິການ ຫຼື ບໍ່?
6. ການສິດສອນ ແລະ ສື່ການຮຽນການສອນທີ່ໃຊ້ໃນຫ້ອງຮຽນ ປາສະຈາກການສອນ ຫຼື ການສົ່ງເສີມຄຳສອນທາງສາສະໜາ ບໍ່?
7. ສື່ການຮຽນການສອນ ປາສະຈາກການສົ່ງເສີມຄວາມລຳອຽງຕໍ່ບຸກຄົນໃດຫນຶ່ງ ຫຼື ບໍ່?
8. ຜູ້ໃຫ້ບໍລິການດ້ານສຸຂະພາບ ໃຫ້ບໍລິການທີ່ເປັນມິດກັບໄວໜຸ່ມ ຫຼື ບໍ່?

ດັດແປງມາຈາກ: ການສະໜັບສະໜູນສຳລັບຊາວໜຸ່ມ, ອຸຍແນສໂກ, ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ. ການຮັກສາສຸຂະພາບທາງເພດຂອງຕົນເອງໃນແຜນການສອນລະດັບພາກພື້ນ: ຊຸດແຜນການສອນຕາມສະຄຣິບສ່ວນບຸກຄົນສຳລັບການສຶກສາທາງເພດແບບຮອບດ້ານໃນອາຟຣິກາຕາເວັນອອກ ແລະ ອາຟຣິກາໃຕ້.

# ວຽກບ້ານ

## ການຮັກສາສຸຂະພາບທາງເພດຂອງຕົນເອງ

**ຊື່:** **ວັນທີ:**

**ຄຳແນະນຳ: ຕື່ມຂໍ້ມູນໃສ່ພາກ ກ-ງ ດ້ວຍຂໍ້ມູນທີ່ໄດ້ແບ່ງປັນໃນຊ່ວງໂມງຮຽນ.**

**ກ: ອົງການ ຫຼື ຄລີນິກທີ່ຜູ້ບັນຍາຍຮັບເຊີນມາຈາກ ແມ່ນຊື່ຫຍັງ?**

______________________________

**ຂ: ລະບຸການບໍລິການສຸຂະພາບທາງເພດທີ່ໄວລຸ້ນສາມາດເຂົ້າເຖິງສາມຢ່າງ:**

1. ______________________________
2. ______________________________
3. ______________________________

**ຄ: ລະບຸຢ່າງຫນ້ອຍຫນຶ່ງສະຖານທີ່ທີ່ໄວໜຸ່ມສາມາດໄປກວດກ່ຽວກັບການຖືພາ ຫຼື ພະຍາດຕິດຕໍ່ທາງເພດສຳພັນ.**

______________________________

______________________________

**ງ: ລະບຸຂໍ້ຈຳກັດດ້ານອາຍຸ ທີ່ແບ່ງປັນໂດຍຜູ້ບັນຍາຍຮັບເຊີນ ກ່ຽວກັບການເຂົ້າເຖິງການບໍລິການຂອງພວກເຂົາ:**

______________________________

______________________________

**ຄຳແນະນຳ: ຕອບຄຳຖາມຂໍ້ ຈ ແລະ ວົງມົນຄຳຕອບທີ່ດີທີ່ສຸດສຳລັບຄຳຖາມຂໍ້ ສ.**

**ຈ. ເປັນຫຍັງເຈົ້າຈຶ່ງຄິດວ່າມັນສຳຄັນສຳລັບບຸກຄົນໃດໜຶ່ງ ໃນການຊອກຫາບໍລິການສຸຂະພາບທາງເພດ ຖ້າຫາກວ່າພວກເຂົາເຈົ້າຕ້ອງການ?**

______________________________

______________________________

**ສ. ໃຜຈະເປັນຜູ້ທີ່ເຈົ້າຈະຂໍໃຫ້ໄປຄລີນິກນຳເຈົ້າ ຖ້າເຈົ້າຕ້ອງການເຂົ້າເຖິງການບໍລິການສຸຂະພາບທາງເພດ?**

a.ແມ່ b. ພໍ່ c. ຜູ້ປົກຄອງ d. ອ້າຍ-ເອື້ອຍນ້ອງ e. ລູກເອື້ອຍລູກນ້ອງ/ລູກອ້າຍລູກນ້ອງ

f. ປ້າ/ອາ/ນ້າສາວ g. ລຸງ h. ເພື່ອນສະໜິດ i. ແຟນ j. ອື່ນໆ:______________________